ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ: 0.8.20./ສ.ວ.ນ

ນະຄອນຫຼວງວຽງຈັນ,ວັນທີ 16 ສິງຫາ 2023

# ມະຕິ

## ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

## ຄັ້ງທີ 03 ປະຈໍາປີ 2023, ວັນທີ 16 ສິງຫາ 2023

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 03/2023 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 16 ສິງຫາ 2023 ທີ່ສໍານັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ສົມຈິດ ອິນທະມິດ** ປະທານສະພາບໍລິຫານ, ສະມາຊິກອິດສະຫຼະ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

**ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:**

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມສະພາບໍລິຫານໃນຄັ້ງທີ 02/2023.
2. **ມະຕິ:** ເຫັນດີຮັບຮອງບົດລາຍງານຜົນການດໍາເນີນທຸລະກິດຂອງບໍລິສັດ ປະຈໍາ 6 ເດືອນຕົ້ນ ປີ 2023 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈໍາ 6 ເດືອນຕົ້ນ ປີ 2023.
3. **ມະຕິ:** ເຫັນດີຮັບຮອງແຜນການດາເນີນທຸລະກິດຂອງບໍລິສັດປະຈໍາ 6 ເດືອນທ້າຍປີ 2023.
4. **ມະຕິ:** ເຫັນດີຮັບຮອງການແຕ່ງຕັ້ງ **ທ່ານ ສອນສະຫວັນ ແສງອະໄພ ເປັນ ສະມາຊິກສະພາບໍລິຫານ, ສະມາຊິກອິດສະຫຼະ** ແທນ ສະມາຊິກສະພາບໍລິຫານຄົນເກົ່າ ທີ່ລາອອກໄປ ໂດຍມີອາຍຸການເທົ່າກັບອາຍຸການທີ່ຍັງເຫຼືອຂອງຄົນເກົ່າທີ່ລາອອກໄປແລ້ວນັ້ນ ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງຕໍ່ໄປ.

ກອງປະຊຸມໄດ້ປິດລົງເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ທ່ານ ສົມຈິດ ອິນທະມິດ